ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ICBC ໄດ້ຈັດພິທີເປີດທະນາຄານ ຊຳລະສະສາງເງິນຢວນ ແຫ່ງ ສປປ ລາວ ຢ່າງເປັນທາງການ




ໃນວັນທີ 23 ຕຸລາ 2023 ຜ່ານມານີ້, ທະນາຄານອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ສາຂານະຄອນຫຼວງວຽງຈັນ (ICBC) ໄດ້ຈັດພິທີເປີດທະນາຄານຊຳລະສະສາງເງິນຢວນ ແຫ່ງ ສປປ ລາວ ຂຶ້ນຢ່າງເປັນທາງການ ທີ່ ນະຄອນຫຼວງວຽງຈັນ ຊຶ່ງໃນພິທີດັ່ງກ່າວໃຫ້ກຽດເຂົ້າຮ່ວມໂດຍ ພະນະທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ, ທ່ານ ຫວາງຊ່າງ ອຸປະທູດສະຖານທູດແຫ່ງ ສປ ຈີນ ປະຈຳ ສປປ ລາວ ແລະ ທ່ານ ຈ່າງ ເວີຍຫວູ ຮອງຜູ້ອຳນວຍການໃຫຍ່ ທະນາຄານ ອຸດສາຫະກຳ ແລະ ການຄ້າຈີນ ຈຳກັດ ກໍ່ໄດ້ໃຫ້ກຽດເຂົ້າຮ່ວມ ແລະ ທ່ານ ລີປິນ ຫົວໜ້າກົມ ເສດຖະກິດມະຫາພາກ ທະນາຄານ ປະຊາຊົນຈີນ ກໍ່ໄດ້ໃຫ້ກຽດເຂົ້າຮ່ວມຜ່ານທາງວິດີໂອ.




ທ່ານ ຈ່າງ ເວີຍຫວູ ໄດ້ກ່າວສະແດງໃຫ້ເຫັນວ່າ ການສ້າງຕັ້ງທະນາຄານ ຊຳລະສະສາງເງິນຢວນ ແຫ່ງ ສປປ ລາວ ແມ່ນເປັນນິມິດໝາຍອັນສຳຄັນໃນດ້ານການຮ່ວມມືການເງິນຂອງສອງປະເທດ ລາວ-ຈີນ, ຊຶ່ງຈະກາຍເປັນສິ່ງອຳນວຍຄວາມສະດວກໃຫ້ແກ່ການຄ້າຂອງສອງປະເທດໃນການຊຳລະສະສາງໂດຍ ສະກຸນເງິນທ້ອງຖິ່ນ, ຊ່ວຍຍົກລະດັບຄຸນນະພາບການໝູນວຽນຂອງເງິນທຶນ, ຊ່ວຍການຊຸກຍູ້ການແລກປ່ຽນດ້ານເຕັກນິກ ແລະ ບຸກຄະລາກອນໃຫ້ມີປະສິດທິພາບສູງຂຶ້ນກວ່າເກົ່າ. ເພື່ອຜັກດັນການຮ່ວມມືດ້ານການເງິນແບບລົງເລິກລະຫວ່າງສະຖາບັນການເງິນຂອງສອງປະເທດ ເພື່ອບັນລຸຜົນປະໂຫຍດຮ່ວມກັນຢ່າງແທ້ຈິງ.



ທະນາຄານ ICBC ຈະນໍາໃຊ້ສັກກະຍະພາບທີ່ໂດດເດັ່ນ, ເພື່ອສະໜອງບໍລິການດ້ານການເງິນຢ່າງມີຄຸນນະພາບສູງ, ປະກອບສ່ວນເຂົ້າໃນວຽກງານການຮ່ວມສ້າງ "ໜຶ່ງແລວໜຶ່ງເສັ້ນທາງ" ແລະ ການຮ່ວມມືໃນກອບແລວທາງເສດຖະກິດ ລາວ-ຈີນ, ຊຸກຍູ້ການຮ່ວມມືທາງດ້ານການຄ້າການລົງທຶນຂອງສອງປະເທດ ລາວ-ຈີນ ໃຫ້ກ້າວໄປສູ່ອີກບາດກ້າວໃໝ່ອັນສໍາຄັນ, ພ້ອມທັງສືບຕໍ່ປະກອບສ່ວນເຂົ້າໃນການກໍ່ສ້າງປະຊາຄົມຄູ່ຮ່ວມຊະຕາກໍາຂອງສອງຊາດ ລາວ-ຈີນ. ທະນາຄານ ICBC ສາຂານະຄອນຫຼວງວຽງຈັນ ສ້າງຕັ້ງຂຶ້ນໃນປີ 2011, ເຊິ່ງເປັນທະນາຄານທຸລະກິດຈີນແຫ່ງທໍາອິດທີ່ເຂົ້າມາສ້າງຕັ້ງໃນ ສປປ ລາວ, ແລະ ໄດ້ກາຍເປັນທະນາຄານທີ່ສໍາຄັນ ໃນການຮັບໃຊ້ ການຄ້າລະຫວ່າງສອງປະເທດ ລາວ-ຈີນ. ໃນວັນທີ 30 ກັນຍາ 2022, ທະນາຄານ ປະຊາຊົນຈີນ ໄດ້ອອກໜັງສືແຈ້ງການ, ໂດຍແຕ່ງຕັ້ງໃຫ້ທະນາຄານ ICBC ສາຂານະຄອນຫຼວງວຽງຈັນ ເປັນທະນາຄານ ຊໍາລະສະສາງເງິນຢວນ ແຫ່ງ ສປປ ລາວ.




ໃນພິທີຄັ້ງນີ້, ໄດ້ມີ 7 ທະນາຄານທຸລະກິດຄື ທະນາຄານການຄ້າຕ່າງປະເທດລາວມະຫາຊົນ, ທະນາຄານພັດທະນາລາວ, ທະນາຄານ ຮ່ວມພັດທະນາ, ທະນາຄານຮ່ວມທຸລະກິດ ລາວ-ຫວຽດ, ທະນາຄານພົງສະຫວັນ, ທະນາຄານ ລາວ-ຈີນ ແລະ ທະນາຄານ BIC ຮ່ວມລົງນາມໃນສັນຍາວ່າດ້ວຍການຊໍາລະສະສາງ ກັບທະນາຄານ ICBC ສາຂານະຄອນຫຼວງ ວຽງຈັນ, ເຊິ່ງໄດ້ ກາຍເປັນ ທະນາຄານ ສະມາຊິກຊຸດທໍາອິດຂອງທະນາຄານ ຊໍາລະສະສາງເງິນຢວນ ແຫ່ງ ສປປ ລາວ. ໃນຖານະທີ່ເປັນທະນາຄານອັນດັບໜຶ່ງຂອງໂລກໃນດ້ານທຸລະກໍາເງິນຢວນ, ທະນາຄານ ICBC ໄດ້ສ້າງລະບົບການຊໍາລະສະສາງເງິນທຶນທີ່ທັນສະໄໝທີ່ສຸດ ໃນຂະແໜງການເງິນ, ເຊິ່ງເປັນທະນາຄານແຫ່ງທໍາອິດທີ່ສະໜອງບໍລິການຊໍາລະສະສາງເງິນ

ປອນຕະຫຼອດ 24 ຊົ່ວໂມງ ມາຮອດປັດຈຸບັນ, ທະນາຄານ ICBC ໄດ້ຮັບໜ້າທີ່ເປັນທະນາຄານ ຊໍາລະ ສະສາງເງິນປອນ ຢູ່ 11 ປະເທດ, ການບໍລິການກວມເອົາການຊໍາລະສະສາງ, ການໂອນເງິນ, ການປ່ອຍກູ້, ການຄໍ້າປະກັນ, ການຊື້ຂາຍ ເງິນຕາຕ່າງປະເທດ, ການຊື້ຂາຍຕາສານອະນຸພັນ ແລະ ອື່ນໆ, ເຊິ່ງການດໍາເນີນທຸລະກໍາເງິນປອນລະຫວ່າງປະເທດ ແລະ ທຸລະກໍາ ເງິນປອນນອກ ສປ ຈີນ ຂອງກຸ່ມທະນາຄານ ICBC ລວມມູນຄ່າຫຼາຍກວ່າ 100,000 ຕື້ປອນ ຕໍ່ປີ.

**ຂ່າວ:** ທະນາຄານ ICBC

**ພາບ: ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ**

*ຢູ່ເມືອງລາວໃຊ້ແຕ່ເງິນກີບ*